ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 19 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 5.9.2013

# ຄໍາສັ່ງ

## ຂອງນາຍົກລັດຖະມົນຕີ

## ວ່າດ້ວຍການປັບປຸງ ແລະ ກໍ່ສ້າງວິສາຫະກິດໃນໄລຍະໃໝ່

ເຖິງ: ບັນດາທ່ານລັດຖະມົນຕີວ່າການກະຊວງ, ຫົວໜ້າອົງການທຽບເທົ່າກະຊວງ, ທ່ານເຈົ້າຄອງນະຄອນຫຼວງວຽງຈັນ, ທ່ານເຈົ້າແຂວງ ໃນທົ່ວປະເທດ.

ນັບແຕ່ ພັກເຮົາໄດ້ດໍາເນີນການປ່ຽນແປງໃໝ່ ໂດຍຫັນປ່ຽນຈາກລະບົບການຄຸ້ມຄອງເສດຖະກິດແບບລວມສູນອາດຍາສິດບໍລິຫານເກື້ອກູນ ໄປສູ່ກົນໄກເສດຖະກິດຕະຫຼາດທີ່ມີການນໍາພາຂອງພັກ, ການຄຸ້ມຄອງດັດສົມຂອງລັດ ແລະ ເປີດກວ້າງການຮ່ວມມືທາງດ້ານເສດຖະກິດກັບຕ່າງປະເທດ, ເປັນເຈົ້າການເຊື່ອມໂຍງກັບພາກພື້ນ ແລະ ສາກົນເທື່ອລະກ້າວ; ລັດຖະບານໄດ້ສົ່ງເສີມ ແລະ ຂະຫຍາຍເສດຖະກິດຫຼາຍພາກສ່ວນ ແລະ ທຸກພາກສ່ວນລ້ວນແຕ່ມີຄວາມສະເໝີພາບຕໍ່ໜ້າກົດໝາຍ. ໄດ້ດໍາເນີນການປັບປຸງ, ດັດແປງພາກສ່ວນເສດຖະກິດຂອງລັດ, ສົ່ງເສີມເສດຖະກິດຄອບຄົວຂອງຊາວກະສິກອນ,ເສດຖະກິດຮ່ວມມືຂອງປະຊາຊົນ ແລະ ເສດຖະກິດເອກະຊົນທັງພາຍໃນ ແລະ ຕ່າງປະເທດໃຫ້ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ, ປະກອບສ່ວນຢ່າງສໍາຄັນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງປະເທດເຮົາ ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ໝັ້ນທ່ຽງ, ເຮັດໃຫ້ລວມຍອດມູນຄ່າຜະລິດຕະພັນພາຍໃນເພີ່ມຂຶ້ນເລື້ອຍໆ, ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່ານັບມື້ນັບໄດ້ຮັບການປັບປຸງຢ່າງບໍ່ຢຸດຢັ້ງ.

ໄປຄຽງຄູ່ກັບດ້ານຕັ້ງໜ້າດັ່ງກ່າວ, ກໍ່ຍັງມີຫຼາຍບັນຫາທີ່ຈະຕ້ອງຕັ້ງໜ້າແກ້ໄຂ ເປັນຕົ້ນ: ດ້ານນິຕິກໍາ ແລະ ກົນໄກຍັງບໍ່ທັນຄົບຊຸດ, ມີອັນກໍ່ຍັງກົດໜ່ວງ; ການບໍລິການລັດຍັງຊັກຊ້າ ແລະ ຫຼາຍຂັ້ນຕອນ, ການແບ່ງຂັ້ນຄຸ້ມຄອງ ແລະ ຄວາມຮັບຜິດຊອບ ຂອງບັນດາຂະແໜງການ ແລະ ທ້ອງຖິ່ນ ຍັງບໍ່ຈະແຈ້ງ. ບັນດາຫົວໜ່ວຍວິສາຫະກິດຍັງອ່ອນນ້ອຍ, ປະສິດທິຜົນຍັງບໍ່ສູງເທົ່າທີ່ຄວນ ແລະ ຄວາມສາມາດແຂ່ງຂັນໃນເງື່ອນໄຂການເຊື່ອມໂຍງສາກົນຍັງຕໍ່າ. ຍິ່ງໄປກວ່ານັ້ນ, ພວກເຮົາຍັງບໍ່ທັນມີນະໂຍບາຍ ແລະ ມາດຕະການອັນແທດເໝາະ ເພື່ອສ້າງ ແລະ ເສີມຂະຫຍາຍກໍາລັງແຮງຂອງບັນດາພາກສ່ວນເສດຖະກິດພາຍໃນເຂົ້າໃນການຂຸດຄົ້ນທ່າແຮງ ແລະ ຄວາມອາດສາມາດບົ່ມຊ້ອນຂອງປະເທດເຮົາ ຕາມທິດທັນເປັນ